# ບົດສະຫຼຸບຫຍໍ້

ທ່າອ່ຽງເສດຖະກິດໂລກມີການປັບປຸງເລັກນ້ອຍໃນປີ 2012. ຫຼັງຈາກມີການຊະລໍຕົວຢ່າງໜັກໃນທ້າຍປີ 2011, ມີຫຼັກຖານອ້າງກ່ຽວກັບການເຕີບໃຫຍ່ຂອງກິດຈະກຳທົ່ວໂລກທີ່ເຮັດໃຫ້ມີການເຂັ້ມແຂງຂຶ້ນໃນເຄິ່ງປີຫຼັງ 2012. ເງື່ອນໄຂທາງດ້ານການເງິນທີ່ຜ່ອນຄາຍ ແລະ ຄວາມສ່ຽງໄດ້ຫຼຸດລົງໃນໄຕມາດທຳອິດຫຼັງຈາກນັກກຳນົດນະໂຍບາຍຫຼີກລ້ຽງວິກິດການທີ່ເກືອບເກີດຂຶ້ນໃນເຂດຢູໂຣບ.

ການຈະເລີນເຕີບໃຫຍ່ໃນອາຊີຄາດການວ່າຈະເປັນແຮງຜັກດັນຂ້າມຜ່ານປີ 2012. ເຖິງແມ່ນວ່າກິດຈະກຳຈະຊີ້ບອກວ່າມີການຊະລໍຕົວໃນຂົງເຂດນີ້ໃນທ້າຍໄຕມາດ 2011, ໂດຍຫຼັກແມ່ນເນື່ອງມາຈາກຄວາມຕ້ອງການພາຍນອກທີ່ອ່ອນແອ, ຄວາມຕ້ອງການພາຍໃນໂດຍທົ່ວໄປຍັງຄົງແຂງແກ່ງ. ຊຶ່ງເປັນຜົນກະທົບຈາກອັດຕາການວ່າງງານຕ່ຳ, ກຳລັງການຜະລິດສູງ, ແລະ ການຈະເລີນເຕີບໂຕທີ່ແຂງແກ່ງຂອງຄວາມເຊື່ອຖື. ໃນເດືອນທຳອິດຂອງປີ 2012, ຕົວຊີ້ວັດທີ່ສຳຄັນຂອງກິດຈະກຳທີ່ແຂງແກ່ງ, ການຄາດການເງິນເຟີ້ໄດ້ຖືກນຳໃຊ້, ແລະ ການໄຫຼເຂົ້າຂອງທຶນເຂົ້າສູ່ຂົງເຂດອາຊີກັບຄືນເຂົ້າມາໃໝ່. ການຈະເລີນເຕີບໂຕຂອງເຂດອາຊີປາຊີຟິກໂດຍທົ່ວໄປແມ່ນຄາດວ່າຈະແມ່ນ 6% ໃນປີ 2012. ໂດຍທົ່ວໄປຈະບໍ່ປ່ຽນແປງຈາກປີທີ່ຜ່ານມາ, ກ່ອນທີ່ຈະເພີ່ມຂຶ້ນປະມານ 6,5% ໃນປີ 2013.

ເຖິງຢ່າງໃດກໍ່ຕາມ, ເສດຖະກິດໂລກຍັງຄົງບອບບາງ, ການເຂົ້າສູ່ອາຊີ, ຄວາມສ່ຽງລົດຂະໜາດຍັງເປັນເລື່ອງຕ້ອງຄິດໜັກ. ວິດກິດການໜີ້ສິນໃນຂົງເຂດຢູໂຣບຍັງບໍ່ໄດ້ຮັບແກ້ໄຂຢ່າງສົມບູນ, ຄວາມວຸ້ນວາຍທາງດ້ານການເງິນຍັງຂະຫຍາຍແຮງຂຶ້ນ ແລະ ແຜ່ລາມໄປທົ່ວໂລກ, ໃນຂະນະທີ່ທາງພູມມິສາດ ແລະ ການເມືອງອາດຍູ້ໃຫ້ລາຄາພະລັງງານເພີ່ມຂຶ້ນຢ່າງແຮງ. ແຕ່ຢ່າງໃດກໍ່ຕາມພື້ນຖານເສດຖະກິດທີ່ເຂັ້ມແຂງ ແລະ ພື້ນຖານນະໂຍບາຍຈະຊ່ວຍໃຫ້ຫຼຸດຜ່ອນເສດຖະກິດສະມາຄົມອາຊຽນຕ້ານກັບວິກິດການການເງິນໂລກ, ລວມທັງການຈຳກັດການໄຫຼເຂົ້າຂອງທຶນທີ່ບໍ່ຕ້ອງການ (ພາກທີ 2) ແລະ ຜົນກະທົບຂອງສະຖານະການທີ່ດີຂຶ້ນໂດຍການຫຼຸດເງິນນຳມາໃຊ້ຂອງທະນາຄານຢູໂຣ (ພາກທີ 3) ແຕ່ການຫຼຸດລົງຢ່າງວ່ອງໄວຂອງການສົ່ງອອກສູ່ປະເທດທີ່ມີການພັດທະນາແລ້ວ ແລະ ການກັບເຂົ້າມາຂອງເງິນທຶນຕ່າງປະເທດຈະສົ່ງຜົນຕໍ່ກິດຈະກຳຂອງອາຊີທັງທາງກົງ ແລະ ຜ່ານຜົນກະທົບຄວາມຕ້ອງການພາຍໃນ. ຍິ່ງໄປກວ່ານັ້ນຄວາມຢ້ານກ່ຽວກັບສິນຄ້າບໍລິໂພກອາດຈະສ້າງຄວາມຫຍຸ້ງຍາກໃນການແລກປ່ຽນລະຫວ່າງຄວາມກົດດັນເງິນເຟີ້ ແລະ ຄວາມສ່ຽງທາງດ້ານງົບປະມານຈາກການອຸດໜູນທາງດ້ານພະລັງງານ ແລະ ອາຫານ.

ໃນປັດຈຸບັນນີ້, ຍັງມີຄວາມສ່ຽງໃຫ້ແກ່ສູນກາງຂອງເຮົາ, ເນື່ອງຈາກນະໂຍບາຍເສດຖະສາດມະຫາພາກໂດຍທົ່ວໄປຍັງຄົງຮັກສາຜ່ອນຄາຍການຮັກສາເສດຖະກິດໃຫ້ມີຄວາມສະເຖຍລະພາບໃນຕໍ່ໜ້າ ແລະ ເງື່ອນໄຂທາງການເງິນຜ່ານໄລຍະປີ 2012 ສາມາດຊ່ວຍກະຕຸ້ນ ແລະ ຟື້ນຟູຄວາມກົດດັນທີ່ຮ້ອນແຮງໃນຂົງເຂດນີ້.

ຕ້ານກັບທີ່ກ່າວມາຂ້າງເທິງນີ້, ຜູ້ກຳນົດນະໂຍບາຍອາຊຽນພົບກັບວຽກທີ່ຫຍຸ້ງຍາກໃນການປັບການປະກັນໄພທີ່ຕ້ອງການໃຫ້ສົມດຸນເພື່ອສົ່ງເສີມຄວາມໝັ້ນຄົງ, ບໍ່ມີການຂະຫຍາຍຕົວຂອງເງິນເຟີ້, ຊະລໍ ແລະ ຟື້ນຟູນະໂຍບາຍມະຫາພາກ ເພື່ອການຟື້ນຕົວຂອງເສດຖະກິດໂລກໃນທ້າຍປີ 2011 ໄດ້ຮັບການປະກັນຢ່າງເຕັມຄວາມສາມາດ ເນື່ອງຈາກຄວາມບໍ່ແນ່ນອນໃນເວລານັ້ນ, ເຖິງຢ່າງໃດກໍ່ຕາມປັດຈຸບັນນີ້ ຜູ້ກຳນົດນະໂຍບາຍຄວນຈະກຽມພ້ອມທີ່ຈະປ່ຽນນະໂຍບາຍ ແລະ ຕໍ່ວົງຈອນນະໂຍບາຍເຂັ້ມງວດທາງດ້ານການເງິນເພື່ອເປັນແຮງກົດດັນທີ່ສູງເກີນທີ່ເຫັນໄດ້ຢ່າງຊັດເຈນ. ແນ່ນອນຄວາມສົມດຸນທີ່ແຕກຕ່າງກັນໄປຂອງແຕ່ລະປະເທດ. ເສດຖະກິດທີ່ມີ

ການເປີດຫຼາຍຂື້ນເພື່ອຫຼຸດຄວາມສ່ຽງ ແລະ ຄວາມໃກ້ສິດໃນການດູແລສະພາບເງິນຕາເພື່ອພະຍາຍາມການຢຸດເຊົາທີ່ຍາວຂື້ນ ແຕ່ຢ່າງອື່ນກ່ຽວກັບເງື່ອນໄຂເພີ່ມເຕີມ, ຄວບຄຸມຫຼັກທີ່ເງິນເຟີ້, ແລະ ການຂະຫຍາຍຂອງສິນເຊື່ອທີ່ມີການລອຍຕົວຫຼາຍຂື້ນອາດຕ້ອງກັບມາເຮັດໃຫ້ສົມດຸນຫຼາຍຂື້ນ. ເຊັ່ນດຽວກັນກັບການຮວມນະໂຍບາຍການເງິນຄວນປັບໃຫ້ເໝາະກັບສະພາບສະເພາະຂອງແຕ່ລະປະເທດຂື້ນກັບຂະໜາດໃຫຍ່, ວົງຈອນທີ່ປັບການການດຸນງົບປະມານ ແລະ ພາກສ່ວນໜີ້ທີ່ກ່ຽວຂ້ອງ.

ແບບທີ່ດີທີ່ສຸດໃນການສ້າງການປະກັນຄວາມສ່ຽງຈາກການຕື່ນຈາກປັດໃຈພາຍນອກຍັງຄົງສ້າງຄວາມເຂັ້ມແຂງພາຍໃນປະເທດທີ່ມີແຫຼ່ງການຈະເລີນເຕີບໂຕ. ການເກີນດຸນການຄ້າທີ່ຕ່ຳໃນປະເທດຈີນໄດ້ເພີ່ມໂອກາດໃຫ້ປະເທດເພື່ອນບ້ານ ແລະ ປ່ຽນແປງຄວາມຕ້ອງການທົ່ວໂລກເພື່ອເປັນການເກີນດຸນຫຼັກໃຫ້ແກ່ເສດຖະກິດທີ່ໄດ້ເກີດຂື້ນ, ແຕ່ການປັບຄວາມສົມດຸນຈະດຳເນີນຕໍ່ໄປ.

ສະນັ້ນຂຶ້ນກັບການປ່ຽນຈາກການລົງທຶນສູ່ການບໍລິໂພກທີ່ປະສົບຜົນສຳເລັດຂອງປະເທດຈີນ (ພາກທີ 4). ໃນປະເທດອິນເດຍການປັບປຸງບັນຍາກາດການລົງທຶນ ແລະ ພື້ນຖານໂຄງລ່າງ ແລະ ການສຶກສາ, ເຊັ່ນດຽວກັບການອຳນວຍຄວາມສະດວກທາງດ້ານການຄ້າ ແລະ ຜ່ອນຄາຍກົດໝາຍແຮງງານແມ່ນກຸນແຈສຳຄັນທີ່ຈະເພີ່ມກຳໄລສູງສຸດໃນການປ່ຽນແປງທາງດ້ານປະຊາກອນຂອງຕົນ. ລະຫວ່າງບັນດາເສດຖະກິດປະເທດອາຊຽນການລົງທຶນຂອງລັດໃສ່ພື້ນຖານໂຄງລ່າງພ້ອມກັບຂອບເຂດໄລຍະກາງທີ່ເໝາະສົມຈະຊ່ວຍໃຫ້ການລົງທຶນພາກເອກະຊົນຫຼາຍຂຶ້ນ ແລະ ການສົ່ງເສີມການຈະເລີນເຕີບໂຕທີ່ກວ້າງຂວາງໃນຂະນະທີ່ປົກປ້ອງຄວາມມີສະເຖຍລະພາບຂອງການເງິນ.

ປະເທດອາຊຽນມີລາຍໄດ້ຕ່ຳ ແລະ ເປັນເກາະເສດຖະກິດນ້ອຍປະເຊີນໜ້າກັບຄວາມທ້າທາຍສະເພາະ (ພາກທີ 5). ປະເທດທີ່ມີລາຍໄດ້ຕ່ຳ, ດຶງດູດການລົງທຶນຈາກຕ່າງປະເທດໂດຍກົງ (ລວມທັງເສດຖະກິດອາຊຽນປະເທດອື່ນ) ອາດເປັນກຸນແຈສຳຄັນທີ່ຈະຊ່ວຍໃຫ້ບັນດາປະເທດມີສ່ວນຮ່ວມຢ່າງເຕັມທີ່ໃນການຈະເລີນເຕີບໂຕໃນພູມມິພາກນີ້ ແລະ ໄດ້ຮັບປະໂຫຍດຈາກການປັບຄວາມສົມດຸນ. ເສດຖະກິດປາຊີຟິກ ແລະ ປະເທດເກາະນ້ອຍປະເຊີນໜ້າກັບຄວາມທ້າທາຍໃນການປັບປຸງເສດຖະກິດຄືນຄວາມຍືດຍຸ່ນທາງເສດຖະກິດເພື່ອປະເຊີນໜ້າກັບການຖ່າຍທອດທາງເສດຖະກິດກະທົບທົ່ວໂລກ ແລະ ຂະຫຍາຍຂອບເຂດການຂະຫຍາຍໃນໄລຍະກາງ.